ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 11 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 21.07.2023

# ຄຳສັ່ງ

## ວ່າດ້ວຍ ການເພີ່ມທະວີຄວາມເຂັ້ມງວດ ໃນການ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າໄມ້, ທີ່ດິນປ່າໄມ້, ຕ້ານ ແລະ ສະກັດກັ້ນ ການບຸກລຸກທຳລາຍປ່າໄມ້, ທີ່ດິນປ່າໄມ້ ແລະ ໄຟໄໝ້ລາມປ່າ.

ເຖິງ: ບັນດາທ່ານ ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ, ເຈົ້າແຂວງ ແລະ ເຈົ້າຄອງນະຄອນ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍ ປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ກົດໝາຍວ່າດ້ວຍ ທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ປະມວນກົດໝາຍອາຍາ ສະບັບເລກທີ 26/ສພຊ, ລົງວັນທີ 17 ພຶດສະພາ 2017;
- ອີງຕາມ ມະຕິ ຂອງກອງປະຊຸມສະພາແຫ່ງຊາດວ່າດ້ວຍແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ຮອດປີ 2030 ສະບັບເລກທີ 098/ສພຊ, ລົງວັນທີ 28 ມິຖຸນາ 2018.

ເພື່ອສະກັດກັ້ນ ແລະ ແກ້ໄຂ ປະກົດການຫຍໍ້ທໍ້ ໃນການບຸກລຸກທຳລາຍປ່າໄມ້, ການຈັບຈອງ, ຊື້ ຂາຍ ທີ່ດິນປ່າໄມ້, ການຖາງປ່າ ແລະ ຈູດປ່າ ທີ່ ເປັນຂະບວນແຜ່ລາມ ເປັນບໍລິເວນກວ້າງ ແລະ ມີທ່າອ່ຽງເພີ່ມຂຶ້ນ ໃນແຕ່ລະປີ ໃຫ້ຫຼຸດນ້ອຍຖອຍລົງ ກ້າວໄປເຖິງ ການຢຸດຕິ ຢ່າງສິ້ນເຊີງ ທັງນີ້ ກໍເພື່ອ ແນໃສ່ຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ບັນລຸ 70% ຂອງເນື້ອທີ່ທົ່ວປະເທດ ຕາມມະຕິ 026/ຄບສພ ກໍຄື ມະຕິ 098/ສພຊ ແລະ ນິຕິກຳທີ່ກ່ຽວຂ້ອງ, ຮັບປະກັນ ການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າໄມ້ ແບບສີຂຽວ ຍືນຍົງ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

## ນາຍົກລັດຖະມົນຕີ ອອກ ຄຳສັ່ງ:

1. ໃຫ້ບັນດາ ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທຸກຂັ້ນ ເພີ່ມທະວີຄວາມເຂັ້ມງວດ ແລະ ເອົາໃຈໃສ່ປະຕິບັດໜ້າທີ່, ຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງຕົນ ໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ບໍ່ໃຫ້ຖືກທຳລາຍ ໂດຍຖືເອົາວຽກງານດັ່ງກ່າວ ເປັນໜ້າທີ່ການເມືອງ, ເປັນຕົວຊີ້ວັດ ຕໍ່ຜົນໄດ້ ຜົນເສຍ ໃນການນຳພາ-ຊີ້ນຳ ຂອງຄະນະພັກ ແລະ ອົງການປົກຄອງ ທຸກຂັ້ນ;
2. ໃຫ້ບັນດາ ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທຸກຂັ້ນ ເປັນເຈົ້າການ ໂຄສະນາ ເຜີຍແຜ່ນະໂຍບາຍ, ກົດໝາຍ, ລະບຽບການ ກ່ຽວກັບ ການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້

ປ່າໄມ້ ແລະ ທີ່ດິນປ່າໄມ້ ດ້ວຍຮູບການ ແລະ ວິທີການຕ່າງໆ ໃຫ້ທົ່ວສັງຄົມ ຮັບຮູ້, ເຂົ້າໃຈ ແລະ ເປັນເຈົ້າການຈັດຕັ້ງປະຕິບັດຢ່າງເຂັ້ມງວດ;

3. ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ກວດກາຄືນ ເຂດແດນປ່າໄມ້ ແລະ ທີ່ດິນປ່າໄມ້ ແຕ່ລະປະເພດ ໃຫ້ລະອຽດ ພ້ອມທັງ ຮີບຮ້ອນດຳເນີນການສຳຫຼວດ ແລະ ວາງແຜນຄຸ້ມຄອງໃຫ້ຖືກຕ້ອງ ແລະ ສອດຄ່ອງ ຕາມກົດໝາຍ ແລະ ລະບຽບການໂດຍການມີສ່ວນຮ່ວມ ຂອງທຸກພາກສ່ວນ ພ້ອມກັນນີ້ ກໍໃຫ້ ສືບຕໍ່ກຳນົດເຂດແດນ, ຕິດປ້າຍ ແລະ ປັກຫຼັກໝາຍໃຫ້ຈະແຈ້ງ ແລະ ໃຫ້ດຳເນີນການແບ່ງຄວາມຮັບຜິດຊອບ ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະນຳໃຊ້ ທີ່ດິນປ່າໄມ້ ໃຫ້ອົງການປົກຄອງທ້ອງຖິ່ນ ຢ່າງຈະແຈ້ງ;
4. ໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນໃຈກາງ ສົມທົບກັບ ຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ກຳນົດແຜນການພັດທະນາ ໃນແຕ່ລະເຂດ ຕາມທ່າແຮງ ແລະ ເງື່ອນໄຂຈຸດພິເສດ ຂອງແຕ່ລະທ້ອງຖິ່ນ ເພື່ອຮອງຮັບການເຄື່ອນຍ້າຍຂອງພົນລະເມືອງ ຕິດພັນກັບ ການພັດທະນາອາຊີບໃໝ່ ທີ່ໝັ້ນຄົງປ່ຽນແທນອາຊີບທີ່ອາໄສກະສິກຳ ເປັນຕົ້ນຕໍ;
5. ໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນເຈົ້າການ ສົມທົບກັບ ກະຊວງກະສິກຳ ແລະປ່າໄມ້, ຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ກວດກາຄືນ ການອອກໃບຕາດິນ, ໃບຢັ້ງຢືນການນຳໃຊ້ທີ່ດິນ ຫຼື ໃບຢັ້ງຢືນການພັດທະນາທີ່ດິນ ແລະ ເອກະສານອື່ນ ກ່ຽວກັບ ການຄອບຄອງນຳໃຊ້ທີ່ດິນ,ການເຊົ່າ ຫຼື ສຳປະທານທີ່ດິນ ໃນເຂດທີ່ດິນປ່າໄມ້, ຫາກເຫັນວ່າ ການອອກອະນຸຍາດ ຫຼື ການໄດ້ມາ ໂດຍບໍ່ຖືກຕ້ອງ ແມ່ນໃຫ້ລຶບລ້າງ ແລະ ດຳເນີນຄະດີ ຕາມກົດໝາຍ;
6. ໃຫ້ອົງການປົກຄອງທ້ອງຖິ່ນ ທຸກຂັ້ນ ເປັນເຈົ້າການ ສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ ຈັດສັນພູມລຳເນົາຄົງທີ່, ເຂດທຳການຜະລິດ ຕິດພັນກັບ ການກຳນົດ ວິທີການ ແລະ ສົ່ງເສີມຮູບແບບການຜະລິດ ທີ່ໝັ້ນຄົງໃຫ້ປະຊາຊົນບັນດາເຜົ່າ ທີ່ອາໄສຢູ່ໃນເຂດຊົນນະບົດ ໂດຍສະເພາະ ຢູ່ໃນເຂດອຸທິຍານແຫ່ງຊາດ, ປ່າປ້ອງກັນ,ປ່າສະຫງວນ ແລະ ປ່າຜະລິດ ເພື່ອປັບປຸງຊີວິດການເປັນຢູ່ ແກ້ໄຂຄວາມທຸກຍາກ ແລະ ຢຸດຕິບັນຫາການເຄື່ອນຍ້າຍຕັ້ງຖິ່ນຖານ ພູມລຳເນົາ ຂອງປະຊາຊົນ ແບບຊະຊາຍ;
7. ໃຫ້ອົງການປົກຄອງທ້ອງຖິ່ນ ທຸກຂັ້ນ ເປັນເຈົ້າການ ສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ ດຳເນີນການກວດກາ,ເກັບກຳຂໍ້ມູນ ແລະ ແກ້ໄຂ ການບຸກລຸກປ່າໄມ້, ການຈັບຈອງ, ຊື້ ຂາຍ ທີ່ດິນປ່າໄມ້, ການດຳເນີນກິດຈະການຫຼື ດຳເນີນທຸລະກິດ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຢູ່ ໃນເຂດປ່າໄມ້ ແລະ ທີ່ດິນປ່າໄມ້, ກໍລະນີບໍ່ໄດ້ຮັບອະນຸຍາດ ຫຼື ເຄື່ອນໄຫວບໍ່ຖືກຕ້ອງ ແມ່ນໃຫ້ຢຸດຕິ, ຍຸບເລີກ, ຮື້ຖອນ, ປະຕິບັດມາດຕະການ ແລະ ດຳເນີນຄະດີ ຕໍ່ຜູ້ລະເມີດຕາມກົດໝາຍ ຢ່າງເຂັ້ມງວດ;
8. ໃຫ້ອົງການປົກຄອງທ້ອງຖິ່ນ ທຸກຂັ້ນ ເປັນເຈົ້າການ ແລະ ເຂັ້ມງວດ ໃນການປ້ອງກັນ, ສະກັດກັ້ນ ການຈູດປ່າແບບຊະຊາຍ, ໃນກໍລະນີ ຫາກເກີດມີໄຟໄໝ້ປ່າ ຢູ່ທ້ອງຖິ່ນໃດ ແມ່ນມອບໃຫ້ທ້ອງຖິ່ນນັ້ນ ເປັນເຈົ້າການ ຈັດຕັ້ງກຳລັງ ພ້ອມທັງວັດຖຸປະກອນ ເພື່ອດັບມອດ ໃຫ້ທັນການ, ຮັບປະກັນ ບໍ່ໃຫ້ເກີດຄວາມເສຍຫາຍຮ້າຍແຮງ ແລະ ແຜ່ລາມ ເປັນບໍລິເວນກວ້າງ;
9. ໃຫ້ຄະນະກຳມະການຄຸ້ມຄອງໄພພິບັດທຸກຂັ້ນ ຖືເອົາວຽກງານປ້ອງກັນ ໄຟໄໝ້ລາມປ່າ ເປັນວຽກງານບຸລິມະສິດໜຶ່ງໃນຂົງເຂດໄພພິບັດແຫ່ງຊາດ ໂດຍການຈັດສັນງົບປະມານ, ກະກຽມວັດຖຸອຸປະກອນທີ່ຈຳເປັນ ໃນການສະກັດກັ້ນ,ຕ້ານ ແລະ ດັບມອດໄຟໄໝ້ລາມປ່າ ໃຫ້ຢູ່ໃນທ່າກຽມພ້ອມ ເພື່ອສະໜອງໃຫ້ທັນເວລາ;
10. ໃຫ້ບັນດາ ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທຸກຂັ້ນ ສືບຕໍ່ ເປັນເຈົ້າການຈັດຕັ້ງປະຕິບັດ ຄຳສັ່ງ 15/ນຍ, ລົງວັນທີ 13 ພຶດສະພາ 2016 ວ່າດ້ວຍ ການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້;
11. ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເປັນຜູ້ກະທຳໂດຍກົງ ຫຼື ຢູ່ເບື້ອງຫຼັງ ຂອງ ການບຸກລຸກ, ຈັບຈອງ, ຊື້ຂາຍ, ບຸກເບີກ, ຖາກຖາງ, ຈູດ, ຕັດໄມ້, ຂະຫຍາຍເນື້ອທີ່ທຳການຜະລິດ ແລະ ດຳເນີນກິດຈະການຕ່າງໆ ທີ່ບໍ່ຖືກຕ້ອງຕາມ ກົດໝາຍ ໃນເຂດປ່າໄມ້ ແລະ ທີ່ດິນປ່າໄມ້ ເປັນຕົ້ນ ຢູ່ໃນເຂດ ອຸທິຍານແຫ່ງຊາດ, ປ່າປ້ອງກັນ, ປ່າ

ສະຫງວນ ແລະ ປ່າຜະລິດ ຢ່າງເດັດຂາດ, ຜູ້ລະເມີດ ຈະຖືກດຳເນີນຄະດີ ຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ;

12. ຫ້າມ ການຈັດຕັ້ງ ທີ່ກ່ຽວຂ້ອງຂອງລັດ ອອກອະນຸຍາດ ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ນຳໃຊ້ທີ່ດິນ ແລະ ດຳເນີນກິດຈະການ ຢູ່ໃນເຂດປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ບໍ່ສອດຄ່ອງຕາມກົດໝາຍ ແລະ ລະບຽບການ;
13. ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຈູດປ່າຊະຊາຍ ເພື່ອລ່າສັດປ່າ, ປູກພືດ, ເປັນສະຖານທີ່ລ້ຽງສັດ ຫຼື ເພື່ອເປົ້າໝາຍອື່ນ, ຜູ້ລະເມີດ ຕ້ອງຮັບຜິດຊອບ ຕໍ່ຜົນເສຍຫາຍທີ່ຕົນໄດ້ສ້າງຂຶ້ນ ແລະ ຈະຖືກດຳເນີນຄະດີ ຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ;
14. ບໍ່ອະນຸຍາດ ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ດຳເນີນກິດຈະການ ຊອກຄົ້ນ, ສຳຫຼວດ ແລະ ຂຸດຄົ້ນແຮ່ທາດ ໃນເຂດ ອຸທິຍານແຫ່ງຊາດ, ປ່າສະຫງວນ ແລະ ປ່າປ້ອງກັນ;
15. ໃຫ້ບັນດາ ທ່ານ ລັດຖະມົນຕີ, ຫົວໜ້າອົງການ, ອົງການລັດທຽບເທົ່າກະຊວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ໃນຂອບເຂດທົ່ວປະເທດ ຄົ້ນຄວ້າກຳແໜ້ນ ຄຳສັ່ງ ສະບັບນີ້ ພ້ອມທັງຜັນຂະຫຍາຍ ອອກເປັນໜ້າວຽກລະອຽດ ຂອງຕົນໂດຍໄວ ພ້ອມທັງຈັດຕັ້ງ ເຜີຍແຜ່ ແລະ ເຊື່ອມຊຶມ ໃນສັງຄົມໃຫ້ມີການຮັບຮູ້, ເຂົ້າໃຈ ຢ່າງຖືກຕ້ອງ ແລະ ຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ, ໃນກໍລະນີ ຂະແໜງການໃດ, ທ້ອງຖິ່ນໃດ ຫາກລະເມີດຕໍ່ ຄຳສັ່ງສະບັບນີ້, ຄະນະນຳ ຂອງຂະແໜງການ ຫຼື ທ້ອງຖິ່ນນັ້ນ ຕ້ອງຮັບຜິດຊອບ ຕໍ່ກົດໝາຍ ທີ່ກ່ຽວຂ້ອງ;
16. ຄຳສັ່ງ ສະບັບນີ້ ມີຜົນສັກສິດ ນັບແຕ່ ວັນລົງລາຍເຊັນ ເປັນຕົ້ນໄປ. ບັນດາ ຄຳສັ່ງ, ຂໍ້ຕົກລົງ, ແຈ້ງການ ແລະ ນິຕິກຳຕ່າງໆ ຂອງຂະແໜງການ ແລະ ລວມທັງຂອງທ້ອງຖິ່ນ ທີ່ໄດ້ປະກາດນຳໃຊ້ຜ່ານມາ ຊຶ່ງມີເນື້ອໃນຂັດກັບ ຄຳສັ່ງ ສະບັບນີ້ ລ້ອນແຕ່ຖືກລຶບລ້າງ.

ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ